ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===000===---

ກະຊວງການເງິນ

ເລກທີ 3013 /ກງ

ນະຄອນຫຼວງວຽງຈັນ, ວັນທີ 24 NOV 2010

## ແຈ້ງການແນະນຳ ຂອງ ລັດຖະມົນຕີວ່າການ ກະຊວງການເງິນ ກ່ຽວກັບ ການມອບເງິນລາຍຮັບງົບປະມານແຫ່ງລັດເຂົ້າບັນຊີເງິນຝາກ ຂອງລັດຖະບານຜ່ານລະບົບທະນາຄານ ໃນຂອບເຂດທົ່ວປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26 ທັນວາ, ປີ 2006.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/95/ສພຊ, ລົງວັນທີ 14 ຕຸລາ, ປີ 1995.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດຂອງລັດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ, ປີ 2006.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ່ 259/ນຍ ລົງວັນທີ 01 ມິຖຸນາ, ປີ 2010 ວ່າດ້ວຍຄັງເງິນແຫ່ງຊາດ.

- ອີງຕາມໜັງສືສະເໜີຂອງຄັງເງິນແຫ່ງຊາດ ສະບັບເລກທີ 4576/ຄງຊ, ລົງວັນທີ 05/11/2010.

ລັດຖະມົນຕີ ວ່າການກະຊວງການເງິນ ອອກແຈ້ງການແນະນຳດັ່ງນີ້:

1. ຈຸດປະສົງ ແລະ ລະດັບຄາດໝາຍ:

1.1. ເພື່ອຮັບປະກັນການເກັບລາຍຮັບງົບປະມານ ເຂົ້າບັນຊີເງິນຝາກຂອງລັດຖະບານ ຜ່ານລະບົບທະນາຄານໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

1.2. ເພື່ອແນະນຳຂັ້ນຕອນ, ວິທີການໃນການມອບລາຍຮັບງົບປະມານ ເຂົ້າບັນຊີເງິນຝາກຂອງລັດຖະບານ ແລະ ການແບ່ງຄວາມຮັບຜິດຊອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໃຫ້ໄປຕາມຂັ້ນຕອນ ແລະ ສອດຄ່ອງກັບລະບຽບກົດໝາຍຢ່າງເຂັ້ມງວດ;

1.3. ເພື່ອເຮັດໃຫ້ການຕິດຕາມ, ກວດກາ, ການລົງບັນຊີ, ການສົມທຽບ ແລະ ການສະຫລຸບລາຍງານລາຍຮັບງົບປະມານລະຫວ່າງຄັງເງິນແຫ່ງຊາດ ກັບຂະແໜງການເກັບລາຍຮັບ ຜ່ານລະບົບທະນາຄານ, ມີຂໍ້ມູນຕົວເລກ ເປັນເອກະພາບກັນ, ຖືກຕ້ອງ, ຊັດເຈນ ຄົບຖ້ວນ ແລະ ທັນຕາມກຳນົດເວລາ;

1.4. ເພື່ອຫລຸດຜ່ອນການນຳໃຊ້ເງິນສົດ, ປະຢັດເວລາ ແລະ ຫຼຸດຜ່ອນຄ່າສິ້ນເປືອງຕ່າງໆທີ່ພົວພັນເຖິງການມອບລາຍຮັບເຂົ້າງົບປະມານ ແລະ ຄ່ອຍໆຫັນວຽກງານການເກັບລາຍຮັບງົບປະມານໄປສູ່ລະບົບທັນສະໄໝເທື່ອລະກ້າວ.

2. ເນື້ອໃນການມອບລາຍຮັບງົບປະມານ ຜ່ານລະບົບທະນາຄານ.

2.1. ການມອບລາຍຮັບງົບປະມານ ຜ່ານລະບົບທະນາຄານ ແມ່ນຜູ້ປະຕິບັດພັນທະຕ້ອງມອບເງິນເຂົ້າບັນຊີເງິນຝາກຂອງລັດຖະບານທີ່ເປີດໄວ້ຢູ່ທະນາຄານ ດ້ວຍເງິນສົດ, ແຊັກ, ການໂອນບັນຊີ, ການໂອນບັນຊີທາງດ້ານເອເລັກໂທນິກ, ບັດເອເລັກໂທນິກ ແລະ ເຄື່ອງມືການຊຳ ລະສະສາງທາງດ້ານການເງິນອື່ນໆ;

2.2. ທຸກປະເພດລາຍຮັບ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຕ້ອງມອບເງິນເຂົ້າບັນຊີເງິນຝາກຂອງລັດຖະບານທີ່ເປີດໄວ້ຢູ່ທະນາຄານ, ຍົກເວັ້ນບາງປະເພດລາຍຮັບທີ່ມອບບໍ່ເປັນປົກກະຕິ, ມີຈຳນວນເງິນໜ້ອຍ ແລະ ບາງປະເພດລາຍຮັບທີ່ເກີດຂຶ້ນຢູ່ເຂດຫ່າງໄກສອກຫລີກບ່ອນທີ່ບໍ່ມີໜ່ວຍບໍລິການຂອງທະນາຄານ ໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0204/ກງ, ລົງວັນທີ 12/02/2009;

2.3. ຜູ້ປະຕິບັດພັນທະສາມາດແຈ້ງມອບພັນທະດ້ວຍຕົນເອງ ຫຼື ອີງຕາມໃບແຈ້ງມອບພັນທະຂອງຂະແໜງເກັບລາຍຮັບ ຫຼື ຜູ້ຖືກມອບສິດສັ່ງມອບລາຍຮັບງົບປະມານ ຕາມລະບຽບກົດໝາຍກຳນົດ ຫຼື ໂດຍຜ່ານຮູບແບບການແຈ້ງເສຍພັນທະດ້ວຍຕົນເອງທີ່ໄດ້ລະບຸໄວ້ໃນລະບຽບກົດໝາຍ;

2.4. ເອກະສານແບບຟອມນຳໃຊ້, ຂັ້ນຕອນ ແລະ ວິທີການມອບລາຍຮັບງົບປະມານເຂົ້າບັນຊີເງິນຝາກຂອງລັດຖະບານປະກອບດ້ວຍ:

- ໃບແຈ້ງມອບພັນທະ ຫຼື ໃບແຈ້ງມອບພັນທະດ້ວຍຕົນເອງ ຊຶ່ງເປັນເອກະສານທີ່ກະຊວງການເງິນກຳນົດໄວ້ໃຫ້ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ຕ້ອງປະຕິບັດຕາມແບບຟອມດັ່ງກ່າວຢ່າງເຂັ້ມງວດເຊັ່ນ: ການມອບລາຍຮັບງົບປະມານເຂົ້າບັນຊີເງິນຝາກຂອງລັດຖະບານ ຢູ່ທະນາຄານ ຕ້ອງມອບໃຫ້ຖືກຕ້ອງ ແລະ ຄົບຖ້ວນ, ຊັດເຈນຕາມຈຳນວນເງິນທີ່ໄດ້ລະບຸໄວ້ໃນໃບແຈ້ງມອບພັນທະດັ່ງກ່າວ;
- ໃບແຈ້ງໜີ້ ຫຼື ໃບມອບເງິນສົດ ແລະ ໃບແຈ້ງມີແມ່ນແບບຟອມ ທີ່ເປັນເອກະສານຢັ້ງຢືນທາງນິຕິກຳ ເຖິງການຈ່າຍເງິນອອກ ແລະ ຮັບເງິນເຂົ້າບັນຊີເງິນຝາກຂອງລັດຖະບານຢູ່ທະນາຄານນອກຈາກໃບແຈ້ງໜີ້, ໃບແຈ້ງມີ ແລະ ໃບມອບເງິນສົດທີ່ໄດ້ກ່າວມານັ້ນ ທະນາຄານຍັງນຳໃຊ້ເຄື່ອງມືການຊຳລະສາງທາງດ້ານການເງິນອື່ນໆ ເພື່ອປະຕິບັດການເບີກຈ່າຍ ແລະ ການມອບລາຍຮັບງົບປະ ມານເຂົ້າບັນຊີເງິນ ຝາກຂອງລັດຖະບານຜ່ານລະບົບທະນາຄານ;

2.5. ໃບແຈ້ງມອບພັນທະ ແມ່ນບັນດາແບບຟອມຂອງຂະແໜງການເກັບລາຍຮັບເຊັ່ນ: ໃບແຈ້ງເສຍພາສີຂາອອກ-ຂາເຂົ້າປະເພດຕ່າງໆ, ໃບສັ່ງມອບເງິນຄ່າທຳນຽມພາສີ, ໃບແຈ້ງເສຍອາກອນ, ເອກະສານບັນທຶກການຊຳລະອາກອນປະເພດຕ່າງໆ, ໃບແຈ້ງເສຍອາກອນກຳໄລລ່ວງໜ້າ, ໃບແຈ້ງອາກອນມູນຄ່າເພີ່ມ, ໃບແຈ້ງເສຍອາກອນມູນຄ່າເພີ່ມ(ສຳລັບບໍລິການ) ໃບສັ່ງມອບອາກອນ, ໃບສັ່ງມອບອາກອນກຳໄລ, ໃບສັ່ງມອບຂອງກົມຄຸ້ມຄອງຊັບສິນ, ໃບສັ່ງມອບຂອງກົມຄຸ້ມຄອງການເງິນລັດວິສາຫະກິດ ແລະ ໃບແຈ້ງມອບພັນທະອື່ນໆ ທີ່ໄດ້ກຳນົດໄວ້ໃນລະບຽບການ.

3. ຂັ້ນຕອນ, ວິທີການມອບລາຍຮັບງົບປະມານ ຜ່ານລະບົບທະນາຄານ

3.1. ຂັ້ນຕອນ

3.1.1 ການອອກໃບແຈ້ງມອບພັນທະຂອງຂະແໜງການເກັບລາຍຮັບ ແລະ ພາກສ່ວນອື່ນທີ່ຖືກມອບສິດ ຊຶ່ງເຮັດໜ້າທີ່ເກັບລາຍຮັບ ແລະ ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດຕ້ອງສະແດງເຈດຈຳນົງຂອງຕົນ ໃນການມອບລາຍຮັບງົບປະມານ ໂດຍແຍກປະເພດລາຍຮັບຕາມສາລະບານງົບປະມານແຫ່ງລັດ ແລະ ລະບຸແຈ້ງປະເພດລາຍຮັບ ພູດຂອງສູນກາງ, ພູດຂອງທ້ອງຖິ່ນ(ນະຄອນຫລວງ, ແຂວງ) ແລະ ພູດແບ່ງປັນລະ ຫ່ວາງສູນກາງ-ທ້ອງຖິ່ນ;

3.1.2 ການມອບພັນທະເຂົ້າບັນຊີເງິນຝາກຂອງລັດຖະບານ ຜ່ານລະບົບທະນາຄານ ແມ່ນຂັ້ນຕອນຂອງຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ຕ້ອງມອບເງິນເຂົ້າບັນຊີເງິນຝາກຂອງລັດຖະບານ ບົນພື້ນຖານ, ເງື່ອນໄຂ ການອອກໃບແຈ້ງມອບພັນທະຂອງຂະແໜງການເກັບລາຍຮັບທີ່ໄດ້ລະບຸໄວ້ໃນຂໍ້ 3.1.1 ຂ້າງເທິງ;

3.1.3 ການຮັບເງິນຂອງພະນັກງານທະນາຄານ ແມ່ນຂັ້ນຕອນການລົງບັນຊີຕິດຕາມການມອບລາຍຮັບງົບປະມານເຂົ້າບັນຊີເງິນຝາກ ຂອງລັດຖະບານຢູ່ທະນາຄານ ແລະ ທະນາຄານອອກໃບຢັ້ງຢືນ(ໃບແຈ້ງໜີ້) ໃຫ້ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ, ສ່ວນໃບແຈ້ງມີ ສົ່ງໃຫ້ຄັງເງິນແຫ່ງຊາດ;

3.1.4 ການລົງບັນຊີລາຍຮັບງົບປະມານ ແມ່ນຂັ້ນຕອນສຸດທ້າຍຂອງຂະບວນການມອບລາຍຮັບງົບປະມານຜ່ານລະບົບທະນາຄານ ຊຶ່ງຄັງເງິນແຫ່ງຊາດເປັນນາຍບັນຊີແຫ່ງລັດ ຈະເປັນຜູ້ບັນທຶກບັນຊີລາຍຮັບງົບປະມານ ສະນັ້ນ ທະນາຄານຕ້ອງສົ່ງຂໍ້ມູນການການລົງບັນຊີປະຈຳວັນ ໃຫ້ຄັງເງິນແຫ່ງຊາດ, ສ່ວນຂະແໜງການເກັບລາຍຮັບ ຕ້ອງເປັນເຈົ້າການປະສານງານ ແລະ ເກັບເອົາເອກະສານຢັ້ງຢືນເຖິງການມອບລາຍຮັບຈາກຄັງເງິນແຫ່ງຊາດເພື່ອໄປສົມທຽບບັນຊີ ແລະ ສະຫຼຸບລາຍງານ.

3.2. ວິທີການ:

3.2.1 ຂະແໜງການເກັບລາຍຮັບ:

- ອອກໃບແຈ້ງມອບພັນທະ ຫຼື ໃບແຈ້ງມອບພັນທະດ້ວຍຕົນເອງໂດຍລະບຸລະອຽດກ່ຽວກັບປະເພດລາຍຮັບງົບປະມານຕາມສາລະບານງົບປະມານ, ລະບຸແຈ້ງປະເພດລາຍຮັບ ພູດຂອງສູນກາງ, ພູດຂອງທ້ອງຖິ່ນ(ນະຄອນຫລວງ, ແຂວງ) ແລະ ພູດແບ່ງປັນລະຫ່ວາງສູນກາງ-ທ້ອງຖິ່ນ, ເລກບັນຊີລາຍຮັບຕາມສາລະບານປະເພດບັນຊີ 7, ເລກປະຈຳຕົວວິສາຫະກິດ(ທະບຽນວິສາຫະກິດ) ຂອງຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນຕາມລະບຽບກົດໝາຍທີ່ໄດ້ກຳນົດ;

- ລາຍການເລກລະຫັດຂອງສູນກາງ, ແຂວງ, ນະຄອນຫລວງ ເປັນເອກະສານຊ້ອນທ້າຍ.

3.2.2 ຜູ້ປະຕິບັດພັນທະງົບປະມານ:

- ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆພາຍຫຼັງທີ່ມີໃບແຈ້ງມອບພັນທະຈາກຂະແໜງການເກັບລາຍຮັບ ແລະ ຜູ້ຖືກມອບສິດແລ້ວສາມາດມອບລາຍຮັບຜ່ານລະບົບທະນາຄານດ້ວຍຮູບແບບການມອບເປັນ ເງິນສົດ, ແຊັກທະນາຄານ, ໂອນບັນຊີ ຫຼື ໂອນຜ່ານລະບົບເອເລັກໂທຣນິກເຂົ້າບັນຊີເງິນຝາກຂອງຄັງເງິນແຫ່ງຊາດຢູ່ທະນາຄານ ຕາມເລກໝາຍບັນຊີ ທີ່ໄດ້ລະບຸໄວ້ໃນ ເອກະ ສານຊ້ອນທ້າຍ;

- ກໍລະນີ ມອບພັນທະດ້ວຍຮູບການອື່ນໆທີ່ມີຄ່າຄືເງິນ ເຊັ່ນ: ແຊັກຄັງເງິນແຫ່ງຊາດ ຕ້ອງໄດ້ຜ່ານການວິຊາແຊັກຢູ່ຄັງເງິນແຫ່ງຊາດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

- ພາຍຫຼັງຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ໄດ້ມອບເງິນເຂົ້າບັນຊີເງິນຝາກງົບປະມານຜ່ານ

ລະບົບທະນາຄານແລ້ວ ສາມາດຖືເອົາໃບແຈ້ງໜີ້ຂອງທະນາຄານ ຊຶ່ງເປັນເອກະສານທາງດ້ານນິຕິກຳໃຊ້ແທນໃບຮັບເງິນຂອງຄັງເງິນແຫ່ງຊາດ ໂດຍມີກາປະທັບຂອງທະນາຄານເປັນການຢັ້ງຢືນການມອບພັນທະຂອງຕົນຖືກຕ້ອງຕາມກົດໝາຍ.

3.2.3 ຄັງເງິນແຫ່ງຊາດ:

- ກວດກາເອກະສານຢັ້ງຢືນໃຫ້ຖືກຕ້ອງ, ຄົບຖ້ວນເຊັ່ນ: ປະເພດລາຍຮັບ, ໃບແຈ້ງມອບພັນທະ ແລະ ລົງບັນຊີຕິດຕາມເປັນແຕ່ລະລາຍການລະອຽດ ບົນພື້ນຖານໃບແຈ້ງມີ ແລະ ໃບລາຍງານບັນຊີສຳຮອງຂອງທະນາຄານ, ຫຼັງຈາກລົງບັນຊີສຳເລັດແລ້ວ ຕ້ອງໄດ້ສົມທຽບຂໍ້ມູນການບັນຊີ ກັບບັນດາຂະແໜງການເກັບລາຍຮັບເປັນປະຈຳວັນ, ອາທິດ, ເດືອນ, ງວດ, ປີ;

- ຄັງເງິນແຫ່ງຊາດ ອອກໃບຮັບເງິນໃຫ້ຜູ້ປະຕິບັດພັນທະສະເພາະບາງປະເພດລາຍຮັບ ທີ່ມອບບໍ່ເປັນປົກກະຕິ, ມີຈຳນວນເງິນໜ້ອຍ ແລະ ບາງປະເພດລາຍຮັບທີ່ເກີດຂື້ນຢູ່ເຂດຫ່າງໄກຊອກຫຼີກບ່ອນທີ່ບໍ່ມີໜ່ວຍ ບໍລິການຂອງທະນາຄານ;

- ຄັງເງິນແຫ່ງຊາດໃຫ້ຖືເອົາ ເອກະສານຂໍ້ມູນທີ່ທະນາຄານສົ່ງໃຫ້ເປັນພື້ນຖານໃນການ ກວດກາ, ສົມທຽບ ລະຫວ່າງ ທະນາຄານ ກັບ ຄັງເງິນແຫ່ງຊາດ ແລະ ອົງການຈັດຕັ້ງເກັບລາຍຮັບ ກັບ ຄັງເງິນແຫ່ງຊາດ.

3.2.4 ທະນາຄານ ທີ່ຄັງເງິນແຫ່ງຊາດໄດ້ເປີດບັນຊີເງິນຝາກ.

- ສະໜອງການບໍລິການໃຫ້ແກ່ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ໃນການມອບລາຍຮັບເຂົ້າບັນຊີເງິນຝາກຂອງລັດຖະບານຢູ່ທຸກຈຸດບໍລິການ ຂອງທະນາຄານຕ່າງໆ ໃນຂອບເຂດທົ່ວປະເທດ ແລະ ອຳນວຍຄວາມສະດວກໃນການເປີດປ່ອງບໍລິການສະເພາະ ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ;

- ບັນທຶກເນື້ອໃນປະກອບມີ: ຊື່, ເລກປະຈຳຕົວຜູ້ເສຍອາກອນ, ໄລຍະເວລາ(ເດືອນ, ງວດ) ຂອງການແຈ້ງມອບ ແລະ ລະຫັດປະເພດບັນຊີລາຍຮັບງົບປະມານຊຶ່ງເປັນເອກະສານຊ້ອນທ້າຍ;

- ອອກໃບແຈ້ງໜີ້ໃຫ້ ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ໂດຍລະບຸຊື່, ເລກປະຈຳຕົວຜູ້ເສຍອາກອນ, ຈຳນວນເງິນ, ເຊັນ ແລະ ປະທັບກາຂອງທະນາຄານຂັດຕິດກັບໃບແຈ້ງມອບພັນທະ.

+ ການແລກປ່ຽນຂໍ້ມູນ:

- ທະນາຄານຕ້ອງສົ່ງຂໍ້ມູນທາງດ້ານເອເລັກໂທຣນິກ ຫຼື ແຟັກໃຫ້ຄັງເງິນແຫ່ງຊາດ ກ່ອນເວລາ 09:00 ໂມງຂອງມື້ຕໍ່ມາ ຊຶ່ງປະກອບດ້ວຍເອກະສານຄື: ໃບແຈ້ງມີ, ສຳເນົາບັນດາໃບແຈ້ງມອບພັນທະ ຫຼື ໃບແຈ້ງມອບອື່ນໆ ແລະ ໃບລາຍງານບັນຊີສຳຮອງ.

4. ຄວາມຮັບຜິດຊອບ ຂອງບັນດາພາກສ່ວນກ່ຽວຂ້ອງ:

4.1. ຂະແໜງການເກັບລາຍຮັບ ມີຄວາມຮັບຜິດຊອບໃນການຊຸກຍູ້, ຕິດຕາມ, ກວດກາ, ໄລ່ລຽງອອກໃບແຈ້ງມອບພັນທະໃຫ້ຄົບຖ້ວນ, ຊັດເຈນ ແລະ ຖືກຕາມລະບຽບກົດໝາຍກຳນົດ;

- ກໍລະນີໃບແຈ້ງມອບພັນທະ ທີ່ໄດ້ອອກຜ່ານມາຫາກມີຂໍ້ຜິດພາດ ຂະແໜງການເກັບລາຍຮັບຕ້ອງເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ມີຄວາມເປັນເອກະພາບກັນໃນການດັດແກ້;

4.2. ຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ ມີຄວາມຮັບຜິດຊອບ ໃນການປະຕິບັດພັນທະຂອງຕົນຕາມລະບຽບກົດໝາຍທີ່ໄດ້ກຳນົດ ຢ່າງຄົບຖ້ວນ, ຖືກຕ້ອງ, ຊັດເຈນ, ທັນກຳນົດເວລາ, ຕ້ອງເກັບຮັກສາເອກະສານຢັ້ງຢືນ ເພື່ອເປັນຫຼັກຖານອ້າງອີງໃນເວລາຖືກກວດກາຈາກພາກສ່ວນກ່ຽວຂ້ອງ;

4.3. ທະນາຄານຜູ້ໃຫ້ບໍລິການ ຕ້ອງມີສ່ວນຮ່ວມໃນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການບໍລິການ ເຊັ່ນ: ການໂຄສະນາ, ແນະນຳວິທີການ ແລະ ຂັ້ນຕອນຕ່າງໆ, ສະຖານທີ່ບໍລິການສຳລັບຜູ້ປະຕິບັດພັນທະຕໍ່ງົບປະມານແຫ່ງລັດ, ສະໜອງຂໍ້ມູນໃຫ້ຄັງເງິນແຫ່ງຊາດ ກ່ຽວກັບການເຄື່ອນໄຫວບັນຊີເງິນຝາກທັງໝົດ;

- ກໍລະນີເກີດມີຂໍ້ຜິດພາດຕ່າງໆ ຕ້ອງຮີບຮ້ອນປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ມີຄວາມເປັນເອກະພາບກັນ ຈຶ່ງດຳເນີນການດັດແກ້ບັນຊີ ແລະ ດ້ານວິຊາການອື່ນໆກໍ່ເຊັ່ນກັນ;

4.4. ຄວາມຮັບຜິດຊອບຂອງຄັງເງິນແຫ່ງຊາດ:

- ເປັນເຈົ້າການທວງ ຫຼື ໄປເກັບເອົາຂໍ້ມູນຈາກທະນາຄານເພື່ອມາລົງບັນຊີ.

- ຫຼັງຈາກຄັງເງິນແຫ່ງຊາດໄດ້ຮັບເອກະສານລາຍງານຈາກທະນາຄານ, ຄັງເງິນແຫ່ງຊາດຕ້ອງລົງບັນຊີຕາມເນື້ອໃນລາຍການຂອງ ໃບແຈ້ງມີ, ສຳເນົາບັນດາໃບແຈ້ງມອບພັນທະ ຫຼື ໃບແຈ້ງມອບອື່ນໆ ແລະ ໃບລາຍງານບັນຊີສຳຮອງ ຂອງທະນາຄານ;

- ສົມທຽບ ຫຼື ແລກປ່ຽນຂໍ້ມູນກັບຂະແໜງການເກັບລາຍຮັບເປັນປະຈຳວັນ, ອາທິດ, ເດືອນ, ງວດ ແລະ ປີ;

- ສັງລວມລາຍງານຕົວເລກລາຍຮັບງົບປະມານທີ່ເກີດຂຶ້ນ ໃນລະບົບບັນຊີຄັງເງິນ ໃຫ້ຂັ້ນເທິງຂອງຕົນຊາບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

5. ມາດຕາການຈັດຕັ້ງປະຕິບັດ:

5.1. ມອບໃຫ້ ຂະແໜງການເກັບລາຍຮັບ ຫຼື ຜູ້ຖືກມອບສິດໃນເກັບລາຍຮັບ ໃນຂອບເຂດທົ່ວປະເທດ ຊີ້ນຳ, ເຜີຍແຜ່, ຕິດຕາມ, ກວດກາ ເພື່ອໃຫ້ທຸກໆພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບ ແລະ ເຂົ້າໃຈຢ່າງເປັນເອກະພາບ;

5.2. ໃຫ້ຂະແໜງການເກັບລາຍຮັບ, ຄັງເງິນແຫ່ງຊາດ ປະສານສົມທົບກັບຂະແໜງການກ່ຽວຂ້ອງຈັດຕັ້ງປະຕິບັດການເກັບລາຍຮັບງົບປະມານ ຜ່ານລະບົບທະນາຄານໂດຍໃຫ້ເລີ່ມປະຕິບັດບ່ອນທີ່ມີເງື່ອນໄຂ, ມີຈຸດບໍລິການຂອງລະບົບທະນາຄານ ແລະ ຈັດຕັ້ງການເຮັດທົດລອງຢູ່ຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາດ່ານພາສີສາກົນທີ່ມີເງື່ອນໄຂ ຫຼັງຈາກນັ້ນຈຶ່ງຜັນຂະຫຍາຍໄປສູ່ທ້ອງຖິ່ນອື່ນໃນຂອບເຂດທົ່ວປະເທດ;

5.3. ຫຼັງຈາກການຈັດຕັ້ງປະຕິບັດການມອບລາຍຮັບຜ່ານລະບົບທະນາຄານ ທີ່ໄດ້ຜ່ານການເຮັດທົດລອງໃນໄລຍະໃດນຶ່ງແລ້ວ ໃຫ້ຄະນະຮັບຜິດຊອບວຽກງານມອບລາຍຮັບຜ່ານລະບົບທະນາຄານ ຕີລາຄາ, ປະເມີນຜົນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງເພື່ອຖອດຖອນບົດຮຽນ ແລະ ຜັນຂະຫຍາຍໃນຂອບເຂດທົ່ວປະເທດ.

5.4. ໃຫ້ຂະແໜງການເກັບລາຍຮັບ, ຄັງເງິນແຫ່ງຊາດ ປະສານສົມທົບກັບທະນາຄານ ບ່ອນທີ່ຕົນເປີດບັນຊີເງິນຝາກ, ສ້າງກົນໄກການປະສານສົມທົບ, ຈຸດປະສານງານ ແລະ ໃນກໍລະນີມີຂໍ້ຄົງ

ຄ້າງທີ່ເກີດຂື້ນຈາກການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຕ້ອງປະຊຸມປຶກສາຫາລື ຫາວິທີການແກ້ໄຂ ຫຼື ນຳສະເໜີຂໍ້ຫິດຂື້ນຳຈາກ ຂັ້ນເທິງຢ່າງທັນການ.

5.5. ແຈ້ງການແນະນຳສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ ວັນທີ 01/01/2011 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ສົມດີ ດວງດີ